*Journal of Science and Teacher Education (JLSTE), 1*(1), 131-140

# ສຶກສາສະພາບການຮຽນ-ການສອນວິຊາຄະນິດສາດໂຮງຮຽນມັດທະຍົມສຶກສາຕອນຕົ້ນເມືອງແປກ ແຂວງຊຽງຂວາງ ສົກຮຽນ 2020-2021

*ວົງສີ ວົງພິມຈັນ**

*ພາກວິຊາສ້າງຄູຄະນິດສາດ-ຟີຊິກສາດ, ວິທະຍາໄລຄູຄັງໄຂ*

---

## ບົດຄັດຫຍໍ້

ການຄົ້ນຄວ້າວິໄຈໃນຄັ້ງນີ້ມີຈຸດປະສົງ: 1) ເພື່ອສຶກສາສະພາບການຮຽນ-ການສອນວິຊາຄະນິດສາດຂອງໂຮງຮຽນມັດທະຍົມສຶກສາຕອນຕົ້ນເມືອງແປກ ແຂວງຊຽງຂວາງ ແລະ 2) ເພື່ອສຶກສາຂໍ້ສະເໜີກ່ຽວກັບສະພາບການຮຽນ-ການສອນວິຊາຄະນິດສາດຂອງໂຮງຮຽນມັດທະຍົມສຶກສາຕອນຕົ້ນເມືອງແປກ ແຂວງຊຽງຂວາງ. ກຸ່ມຕົວຢ່າງໃນການຄົ້ນຄວ້າຄັ້ງນີ້ແມ່ນການເລືອກເອົາແບບເຈາະຈົງໂດຍເລືອກເອົາຕົວແທນໂຮງຮຽນມັດທະຍົມຕອນຕົ້ນເມືອງແປກ ແຂວງຊຽງຂວາງຈຳນວນ 5 ໂຮງຮຽນ ລວມທັງໝົດ 214 ຄົນໃນນີ້ມີ 3 ພາກສ່ວນຄື: 1) ຜູ້ບໍລິຫາໂຮງຮຽນ, 2) ຄູສອນຄະນິດສາດ ແລະ 3) ນັກຮຽນ. ເຄື່ອງມືໃນການຄົ້ນຄວ້າຄັ້ງນີ້ ແມ່ນເປັນແບບສອບຖາມແບບປະມານຄ່າ ແລະ ຄຳຖາມແບບປາຍເປີດເຊິ່ງເປັນຄຳສະເໜີຂອງຜູ້ຕອບແບບສອບຖາມ. ຜົນການຄົ້ນຄວ້າພົບວ່າ ຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ, ຄູສອນຄະນິດສາດ ແລະ ນັກຮຽນມັດທະຍົມຕອນຕົ້ນເມືອງແປກ ແຂວງຊຽງຂວາງກ່ຽວກັບການຈັດການຮຽນ-ການສອນຄະນິດສາດແມ່ນຢູ່ໃນລະດັບຫຼາຍ. ນອກຈາກນັ້ນ ຄຳສະເໜີຂອງແຕ່ລະກຸ່ມກໍມີຄວາມແຕກຕ່າງກັນ ເຊິ່ງຜູ້ບໍລິຫານໂຮງຮຽນສ່ວນຫຼາຍແມ່ນເນັ້ນໃສ່ດ້ານການບໍລິຫານບຸກຄະລາກອນ, ຄູສອນຄະນິດສາດສ່ວນຫຼາຍແມ່ນເນັ້ນໃສ່ດ້ານອຸປະກອນການຮຽນ-ການສອນ ແລະ ນັກຮຽນມັດທະຍົມຕອນຕົ້ນສ່ວນຫຼາຍແມ່ນເນັ້ນໃສ່ດ້ານການເຄື່ອນໄຫວນອກຫຼັກສູດ.

***ຄຳສັບສຳຄັນ:*** *ສະພາບການຈັດການຮຽນ-ການສອນ, ການບໍລິຫານບຸກຄະລາກອນ, ອຸປະກອນການຮຽນການສອນ, ກິດຈະກຳນອກຫຼັກສູດ*

---

** ຕິດຕໍ່ພົວພັນ: ວົງສີ ວົງພິມຈັນ; ໂທ: 02055588498; ອີເມວ: vongsy654@gmail.com*

# Studying the Teaching and Learning Situation of Mathematics in Lower Secondary Schools in Pek District, Xiengkhuang Province, Academic Year 2020-2021

*Vongsy Vongphimchanh**

*Department of Mathematics-Physics, Khangkhay Teacher Training College*

## Abstract

The purpose of this research is to study the teaching and learning situation of mathematics in lower secondary schools in Pek District, Xiengkhuang Province, and to propose recommendations for its improvement. The sample group for this research was selected using a purposive sampling method, consisting of representatives from five lower secondary schools, totalling 214 participants. The participants were divided into three groups: school administrators, mathematics teachers, and lower secondary students. The research tools used in this study included questionnaires and open-ended questions, allowing respondents to provide suggestions. The results indicated that the opinions of school administrators, mathematics teachers, and lower secondary students in Pek District, Xiengkhuang Province, regarding the management of mathematics teaching and learning, were at a very high level. Additionally, the recommendations varied among groups: school administrators primarily focused on personnel management, mathematics teachers emphasized the need for teaching and learning materials, and students highlighted the importance of extracurricular activities.

***Key words**: Teaching and Learning Situation, Personnel management, Teaching learning materials, extracurricular activities*

## 1. ພາກສະເໜີ

*1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

ລັດຖະບານ ສປປ ລາວໄດ້ກຳນົດວິໄສທັດໃນການພັດທະນາວັດທະນະທຳ-ສັງຄົມຮອດປີ 2030 ໄວ້ວ່າ "ຊັບພະຍາກອນມະນຸດໄດ້ຮັບການພັດທະນາໃຫ້ມີຄຸນນະພາບໃກ້ຄຽງກັບພາກພື້ນ ແລະ ສາກົນ, ເປັນກຳລັງການພະລິດທີ່ເຂັ້ມແຂງ, ຕອບສະໜອງໄດ້ຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດຫຼາຍຂຶ້ນ, ລະດັບການສຶກສາທົ່ວໄປຂອງພົນລະເມືອງລາວຈົບຊັ້ນມັດທະຍົມຕອນປາຍ, ປະຊາຊົນໄດ້ຮັບການບໍລິການທາງດ້ານສາທາລະນາສຸກທີ່ມີຄຸນນະພາບຢ່າງທົ່ວເຖິງ ແລະ ອາຍຸຍືນສະເລ່ຍສູງກວ່າ 75 ປີ" ບົນພື້ນຖານວິໄສທັດ ແລະ ຍຸດທະສາດຂອງລັດຖະບານທີ່ກຳນົດ. ກະຊວງສຶກສາທິການ ແລະ ກິລາຈຶ່ງໄດ້ກຳນົດວິໄສທັດໄວ້ດັ່ງນີ້ "ຮອດປີ 2030 ພົນລະເມືອງລາວທຸກຄົນໄດ້ຮັບການສຶກສາທີ່ມີຄຸນນະພາບ ແລະ ເທົ່າທຽມກັນເພື່ອໃຫ້ເຂົາເຈົ້າໄດ້ພັດທະນາຕົນເອງກາຍເປັນພົນລະເມືອງດີຂອງຊາດ, ມີຄຸນສົມບັດ, ມີສຸຂະພາບເຂັ້ມແຂງ, ມີຄວາມຮູ້ຄວາມສາມາດສູງ, ມີຄວາມເປັນມືອາຊີບເພື່ອພັດທະນາປະເທດຊາດໃຫ້ສີວິໄລຍືນຍົງ, ສາມາດເຊື່ອມໂຍງ, ແຂ່ງຂັນກັບພາກພື້ນ ແລະ ສາກົນ". ດັ່ງນັ້ນ, ຕ້ອງຖືເອົາການສຶກສາເປັນພາລະໜ້າທີຫຼັກຂອງການພັດທະນາຊັບພະຍາກອນມະນຸດເລັ່ງດຳເນີນການປະຕິຮູບການສຶກສາແຫ່ງຊາດໃຫ້ມີຄຸນນະພາບ ແລະ ມີມາດຕະຖານສູງຂຶ້ນ "ສ້າງຄົນລາວໃຫ້ເປັນພົນລະເມືອງດີ, ມີລະດັບການສຶກສາດີ, ມີຄວາມຮູ້, ມີວິຊາອາຊີບ, ມີຄວາມສາມາດປະດິດສ້າງ, ມີຄວາມກະຕືລືລົ້ນຕໍ່ການພັດທະນາປະເທດຊາດພັດທະນາຕົນເອງ, ມີສຸຂະພາບແຂງແຮງ ແລະ ມີຄຸນສົມບັດສິນທຳທີ່ໂປ່ງໃສ" (ກະຊວງສຶກສາ ແລະ ກິລາ, 2015).

ຫຼັກສູດຊັ້ນມັດທະຍົມຕອນຕົ້ນແມ່ນໄດ້ພັດທະນາມາເປັນລະບົບ 4 ປີຮຽນກໍເພື່ອຮັບປະກັນການສ້າງ ຄົນຮຸ່ນໃໝ່ໃຫ້ເປັນໄປຕາມທິດໃນການພັດທະນາເສດຖະກິດ-ສັງຄົມ, ສ້າງເດັກໃຫ້ເປັນຄົນທີ່ມີລັກສະນະຊາດ, ວິທະຍາສາດ, ທັນສະໄໝ ແລະ ຫຍັບມໍ່ກັບສາກົນເທື່ອລະກ້າວໃນຫຼັກສູດການຮຽນການສອນຄະນິດສາດຄືເອກະສານທີ່ກຳນົດຈຸດມຸ່ງໝາຍຂອງການສຶກສາ, ໂຄງສ້າງເນື້ອໃນ, ວິທີການຈັດການຮຽນ-ການສອນແຕ່ລະຊັ້ນ, ການວັດຜົນຂອງວິຊາຕ່າງໆ ເພື່ອຮັບປະກັນໃຫ້ຜູ້ຮຽນມີຄວາມຮູ້ຄວາມສາມາດ ແລະຄຸນສົມບັດສິນລະທຳປະຕິວັດ (ກະຊວງສຶກສາທິການ ແລະ ກິລາ, 2015).

ຄະນິດສາດເປັນວິຊາທີຝຶກຂະບວນການຄິດ ແລະ ຝຶກການແກ້ບັນຫາຊ່ວຍພັດທະນາສັກກະຍາພາບຂອງແຕ່ລະບຸກຄົນໃຫ້ເປັນຄົນທີ່ສົມບູນ, ຊ່ວຍເສີມສ້າງໃຫ້ມີເຫດຜົນ, ເປັນຄົນຊ່າງຄິດ ແລະ ສ້າງສັນໃຫ້ມີລະບົບລະບຽບເປັນວິຊາທີ່ສາມາດພັດທະນາໃນການແກ້ໄຂບັນຫາຂອງຜູ້ຮຽນ, ເມື່ອຮຽນຮູ້ຄະນິດສາດສາມາດຖ່າຍທອດ ແລະ ເຊື່ອມໂຍງໄປສູ່ການແກ້ໄຂບັນຫາຕາມເນື້ອໃນອື່ນໆ ຂອງຫຼັກສູດໃນໂຮງຮຽນ; ຄູຈະຕ້ອງສົ່ງເສີມໃຫ້ນັກຮຽນມີທັກສະຢ່າງກ້ວາງຂວາງ, ທັນກັບເຕັກໂນໂລຍີສະໄໝໃໝ່, ໃຫ້ນັກຮຽນມີໂອກາດໄດ້ຮຽນຮູ້ ແລະ ໃຊ້

ຍຸດທະວິທີໃນການແກ້ບັນຫາທີ່ຫຼາກຫຼາຍໃນໄລຍະສອງສັດຕະວັດທີ່ຜ່ານມານີ້ ນັກຄະນິດສາດໄດ້ເນັ້ນຄວາມສໍາຄັນກັບບົດບາດຂອງການແກ້ບັນຫາໃນຫຼັກສູດຄະນິດສາດ (ກະຊວງສຶກສາທິການ ແລະ ກິລາ, 2010).

ໃນປະຈຸບັນສະພາບການຈັດການຮຽນ-ການສອນວິຊາຄະນິດສາດຂອງນັກຮຽນໂຮງຮຽນມັດທະຍົມຕອນຕົ້ນເມືອງແປກແຂວງຊຽງຂວາງຍັງພົບຄວາມຫຍຸ້ງຍາກຫຼາຍດ້ານເຊັ່ນປະສົບການບໍລິຫານວຽກງານການສຶກສອນຂອງຜູ້ບໍລິຫານຍັງບໍ່ມີຫຼາຍ, ຄູສອນບາງຄົນຍັງຂາດທັກສະໃນການຈັດກິດຈະກໍາການຮຽນ-ການສອນໃນຫ້ອງຮຽນ, ບາງໂຮງຮຽນສື່-ອຸປະກອນການຈັດການຮຽນ-ການສອນຍັງບໍ່ພຽງພໍກັບຄວາມຕ້ອງການຕົວຈິງ, ມີຫ້ອງສະໝຸດແຕ່ເອກະສານທີ່ກ່ຽວຂ້ອງກັບວິຊາຄະນິດສາດຍັງບໍ່ຫຼາຍ. ນັກຮຽນສ່ວນຫຼາຍຍັງຂາດຄວາມຮູ້ພື້ນຖານເດີມ, ບໍ່ຄ່ອຍມີທັດສະນະຄະຕິຕໍ່ການຮຽນວິຊາຄະນິດສາດ, ຄວາມສໍາພັນລະຫວ່າງນັກຮຽນກັບຄູທີ່ຈະນໍາໄປສູ່ການສຶກສາຍັງບໍ່ຄ່ອຍດີ, ຄວາມຮູ້ຄວາມສາມາດໃນການບໍລິຫານໂຮງຮຽນຂອງຜູ້ບໍລິຫານບາງຄົນຍັງບໍ່ທັນສູງເນື່ອງຈາກວ່າປະສົບການເຮັດວຽກຍັງບໍ່ຫຼາຍ (ຫ້ອງການສຶກສາທິການ ແລະ ກິລາ ເມືອງແປກ, 2020).

ຈາກເຫດຜົນດັ່ງກ່າວຜູ້ຄົ້ນຄ້ວາຈຶ່ງເຫັນຄວາມສໍາຄັນຕໍ່ສະພາບການຮຽນ-ການ ສອນວິຊາຄະນິດສາດຂອງໂຮງຮຽນມັດທະຍົມສຶກສາຕອນຕົ້ນເມືອງແປກແຂວງຊຽງຂວາງ ສະນັ້ນ, ຜູ້ຄົ້ນຄ້ວາຈະຕ້ອງໄດ້ສຶກສາຄົ້ນຄວ້າຕໍ່ໄປວ່າຄຸນນະພາບການສອນ, ພຶດຕິກໍາການສອນ, ຄວາມສໍາພັນລະຫວ່າງຜູ້ສອນ ແລະ ຜູ້ຮຽນ, ທັດສະນະຄະຕິຕໍ່ວິຊາຄະນິດສາດ, ທັດສະນະຄະຕິຕໍ່ຜູ້ສອນ, ແຮງຈູງໃຈຄວາມສໍາເລັດ, ພຶດຕິກໍາໃນການຮຽນ, ເວລາທີ່ໃຊ້ໃນການສຶກສາເພີ່ມເຕີມ, ກຸ່ມໝູ່ ເພື່ອນ, ສື່-ອຸປະກອນການຮຽນການສອນ ແລະ ສະພາບແວດລ້ອມໃນໂຮງຮຽນຂໍ້ໃດແດ່ທີ່ມີຜົນຫຼາຍກວ່າເພື່ອຈະນໍາຜົນການຄົ້ນຄ້ວານີ້ໄປນໍາໃຊ້ເປັນແນວທາງໃນການພັດທະນາການຮຽນ-ການສອນວິຊາຄະນິດສາດໃຫ້ມີປະສິດທິຜົນສູງຂຶ້ນ.

ການຄົ້ນຄວ້າຄັ້ງນີ້ມີຈຸດປະສົງຄື: ເພື່ອສຶກສາສະພາບການຮຽນ-ການສອນວິຊາຄະນິດສາດຂອງໂຮງຮຽນມັດທະຍົມສຶກສາຕອນຕົ້ນເມືອງແປກ ແຂວງຊຽງຂວາງ ແລະ ເພື່ອສຶກສາຂໍ້ສະເໜີກ່ຽວກັບສະພາບການຮຽນ-ການສອນວິຊາຄະນິດສາດຂອງໂຮງຮຽນມັດທະຍົມສຶກສາຕອນຕົ້ນເມືອງແປກ ແຂວງຊຽງຂວາງ.

*1.2. ຄໍາຖາມຂອງການຄົ້ນຄ້ວາ*

1. ສາສະພາບການຮຽນ-ການສອນວິຊາຄະນິດສາດຂອງໂຮງຮຽນມັດທະຍົມສຶກສາຕອນຕົ້ນເມືອງແປກ ແຂວງຊຽງຂວາງເປັນແນວໃດ?

2. ຂໍ້ສະເໜີກ່ຽວກັບສະພາບການຮຽນ-ການສອນວິຊາຄະນິດສາດຂອງໂຮງຮຽນມັດທະຍົມສຶກສາຕອນຕົ້ນເມືອງແປກ ແຂວງຊຽງຂວາງເປັນແນວໃດ?

*1.3. ຈຸດປະສົງຂອງການຄົ້ນຄ້ວາ*

1. ເພື່ອສຶກສາສະພາບການຮຽນ-ການສອນວິຊາຄະນິດສາດຂອງໂຮງຮຽນມັດທະຍົມສຶກສາຕອນຕົ້ນເມືອງແປກ ແຂວງຊຽງຂວາງ

2. ເພື່ອສຶກສາຂໍ້ສະເໜີກ່ຽວກັບສະພາບການຮຽນ-ການສອນວິຊາຄະນິດສາດຂອງໂຮງຮຽນມັດທະຍົມສຶກສາຕອນຕົ້ນເມືອງແປກ ແຂວງຊຽງຂວາງ.

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ໃນການສຶກສາສະຄັ້ງນີ້ຜູ້ສຶກສາໄດ້ບົດຄົ້ນຄວ້າເພື່ອນໍາໃຊ້ໃນແນວທາງການສຶກສາຄົ້ນຄວ້າ ດັ່ງນີ້:

ສູນພັດທະນາຄູ ແລະ ຜູ້ບໍລິຫານການສຶກສາ (2006) ການຄົ້ນຄວ້າການຮຽນຄະນິດສາດໃນຊັ້ນປະຖົມພົບວ່າ ຜົນການຮຽນຂອງນັກຮຽນບໍ່ໄດ້ຕາມຄາດໝາຍທີ່ຫຼັກສູດກໍານົດໄວ້ເຊັ່ນການທົດສອບຄວາມຮູ້ພື້ນຖານຂອງນັກຮຽນເຫັນວ່າຍັງຕໍ່າ, ນັກຮຽນຂາດທັກສະໃນການຄໍານວນເລກສີ່ປະການ, ນັກຮຽນບອກຮູບເລຂາໜ້າພຽງບໍ່ຖືກຕ້ອງ ແລະ ສັງເກດເຫັນຄໍາຕອບຂອງນັກຮຽນຈະໝາຍຄໍາຕອບທີ່ຜິດຫຼາຍກວ່າຕອບຖືກອີກດ້ານໜຶ່ງນັກຮຽນບໍ່ສາມາດແກ້ໂຈດດ້ວຍຕົນເອງໄດ້ຍ້ອນນັກຮຽນຂາດທັກສະໃນການອ່ານການຄົ້ນຄິດການໄຈ້ແຍກວ່າສິ່ງໃດທີ່ໂຈດບອກໃຫ້ຮູ້ ແລະ ສ່ວນໃດໂຈດໃຫ້ຊອກຫາ. ດັ່ງນັ້ນ,ຈຶ່ງເຮັດໃຫ້ຜົນການຮຽນຕໍ່າໃນວິຊາຄະນິດສາດ.

ສົມລວຍ ສຸຕິຍະໄທ (1998) ໄດ້ສຶກສາຮູບແບບຂອງຜົນການຮຽນວິຊາຄະນິດສາດຊັ້ນໄດຍົມສຶກສາ ປີທີ 3 ຂອງ ສປປ ລາວ ຜົນການຄົ້ນຄວ້າພົບວ່າຮູບແບບຂອງຜົນການຮຽນວິຊາຄະນິດສາດຊັ້ນມັດຍົມປີທີ 3 ຂອງ ສປປ ລາວປາກົດດັ່ງນີ້ ຕົວປ່ຽນທີ່ມີອິດທິພົນໃນຮູບທີ່ເປັນສາເຫດໂດຍທາງກົງ ແລະ ທາງອ້ອມຕໍ່ ຜົນການຮຽນວິຊາຄະນິດສາດໄດ້ແກ່ຄວາມຖະນັດທາງການຮຽນຄະນິດສາດຕົວປ່ຽນທີ່ມີອິດທິພົນໃນຮູບທີ່ເປັນສາເຫດໂດຍທາງກົງຕໍ່ຜົນສໍາເລັດທີ່ທາງການຮຽນວິຊາຄະນິດສາດໄດ້ແກ່ຄວາມຮູ້ພື້ນຖານເດີມ.

ວິມົນວັນ ມີບຸນ (2014) ພຶດຕິກໍາການສອນຄະນິດສາດຂອງຄູທີ່ໄດ້ຮັບຖານະທາງດ້ານວິຊາການລະດັບມັດທະຍົມສຶກສາພົບວ່າ: 1) ຄູມີການກຽມການສອນເໝາະສົມກັບຈຸດໝາຍຂອງຫຼັກສູດ, ການສຶກສາ ແລະ ວິເຄາະຫຼັກສູດ, 2) ຄູມີການສອນຕາມລໍາດັບຂັ້ນຈາກການທົບທວນຄວາມຮູ້ພື້ນຖານເດີມໄປສູ່ການສອນເນື້ອໃນໃໝ່, ສະເໜີເນື້ໃນບົດຮຽນເໝາະສົມກັບລະດັບຜູ້ຮຽນ, ອະທິບາຍບົດຮຽນໄດ້ຈະແຈ້ງ, ກວດສອບຄວາມເຂົ້າໃຈເນື້ອໃນໃໝ່ຂອງນັກຮຽນ ແລະ ໃຫ້ນັກຮຽນໄດ້ເຝິກທັກສະ ແລະ 3) ຄູມີການໃຊ້ສື່ການສອນທີ່ມີຂະໜາດເໝາະສົມກັບຊໍາອາຍຸ ແລະ ຂັ້ນຮຽນ.

ບົງລັກສອນ ເຮືອນທອງ (*2007*) ຮູບແບບການບໍລິຫານໂຮງຮຽນທີ່ມີປະສິດທິຜົນພົບວ່າ: ການບໍລິຫານໂຮງຮຽນທີ່ມີປະສິດທິຜົນປະກອບມີ 8 ອົງປະກອບຄື 1) ເປັນອົງກອນແຫ່ງການຮຽນຮູ້, 2) ຜູ້ບໍລິຫານ ແລະ ຄູເປັນມືອາຊີບ, 3) ການປະກັນຄຸນນະພາບກວດສອບໄດ້ ແລະ ໜ້າເຊື່ອຖື, 4) ສະພາບແວດລ້ອມເອື້ອອຳນວຍຕໍ່ການຮຽນຮູ້, 5) ການມີວິໄສທັດ ແລະ ຈຸດປະສົງຮ່ວມກັນ, 6) ເນັ້ນການຮຽນ-ການສອນ, 7) ການຮຽນ-ການສອນທີ່ມີຈຸດປະສົງ ແລະ 8) ມີຄວາມຄາດຫວັງຕໍ່ນັກຮຽນສູງ.

ນໍ້າເພັດ ສີທອງ (1998) ໄດ້ກ່າວວ່າ ອິດທິພົນທີ່ມີຜົນຕໍ່ການຮຽນຮູ້ໄດ້ແກ່ພັນທຸກຳ ແລະ ສິ່ງແວດລ້ອມ ສະຫຼຸບໄດ້ວ່າ ອົງປະກອບທີ່ມີອິດທິພົນຕໍ່ຜົນສຳເລັດທາງການຮຽນຂອງເດັກຈະຕ້ອງປະກອບດ້ວຍສະຕິປັນຍາຂອງເດັກສິ່ງແວດລ້ອມທາງຄອບຄົວເຊິ່ງໝາຍເຖິງການທີ່ເດັກໄດ້ຮັບຄວາມຮັກເອົາໃຈໃສ່ຈາກຄອບຄົວທາງສັງຄົມໄດ້ແກ່ຢູ່ໃນສັງຄົມແຫ່ງການຮຽນຮູ້ບໍ່ແມ່ນສັງຄົມທີ່ມີແຕ່ບັນຫາບໍ່ວ່າຈະເປັນບັນຫາຢາເສບຕິດ ຫຼື ບັນຫາຄອບຄົວ ຕະຫຼອດຈົນຂະບວນການຮຽນ-ການສອນໃນໂຮງຮຽນເຊິ່ງຖ້າຫາກພໍ່ແມ່ ແລະຄູເບິ່ງແຍງເອົາໃຈໃສ່ໃຫ້ເດັກຈະເລີນເຕີບໂຕພັດທະນາທາງຮ່າງກາຍ, ຈິດໃຈ ແລະ ເສີມສະຕິປັນຍາທີ່ຖືກທິດທາງເດັກກໍຈະເລີນເຕີບໂຕພ້ອມກັບຄວາມສຳເລັດໃນດ້ານການຮຽນ ແລະ ໃນທີ່ສຸດກໍຈະກາຍເປັນຄົນດີ ແລະ ຮັບຜິດຊອບໃນສັງຄົມຕໍ່ໄປ.

## 3. ວິທີດຳເນີນການຄົ້ນຄວ້າ

*3.1 ປະຊາກອນ ແລະ ກຸ່ມຕົວຢ່າງ*

ປະຊາກອນໃນການຄົ້ນຄວ້າຄັ້ງນີ້ແມ່ນຜູ້ບໍລິຫານໂຮງຮຽນ, ຄູສອນຄະນິດສາດ ແລະ ນັກຮຽນມັດທະຍົມຕອນຕົ້ນເມືອງແປກ ແຂວງຊຽງຂວາງ ທັງໝົດ 10 ແຫ່ງ, ແຕ່ກຸ່ມຕົວຢ່າງທີ່ໃຊ້ໃນການຄົ້ນຄວ້າໃນຄັ້ງນີ້ມີ 5 ໂຮງຮຽນມີຜູ້ບໍລິຫານ 11 ທ່ານ , ຄູສອນວິຊາຄະນິດສາດ 27 ທ່ານ, ນັກຮຽນ ມີ 176 ຄົນ ລວມທັງໝົດແມ່ນ 214 ຄົນ.

*3.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ*

ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ: ແມ່ນເປັນແບບສອບຖາມກ່ຽວກັບສະພາບການຮຽນ-ການສອນວິຊາຄະນິດ ປະກອບມີ 3 ຕອນຄື ຕອນທີ 1. ເປັນຄຳຖາມກ່ຽວກັບຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ, ຕອນທີ 2. ເປັນແບບສອບຖາມກ່ຽວກັບກັບສະພາບການຮຽນ-ການສອນວິຊາຄະນິດ ແລະ ຕອນທີ 3. ເປັນແບບສອບຖາມປາຍເປີດ.

*3.3 ວິທີເກັບກຳຂໍ້ມູນ*

ວິທີການເກັບກຳຂໍ້ມູນໃນການຄົ້ນຄວ້າມີດັ່ງນີ້:

ການຄັດເລືອກສະຖານທີ່ແມ່ນ: ໄດ້ເລືອກເອົາແບບເຈາະຈົງຈຳນວນໂຮງຮຽນມັດທະຍົມສຶກສາຕອນຕົ້ນ 5 ແຫ່ງໃນ 10 ແຫ່ງ ເພື່ອເປັນກຸ່ມຕົວຢ່າງໃນການຄົ້ນຄວ້າ

ໄລຍະເວລາການຄົ້ນຄ້ວາ:ໄດ້ໃຊ້ເວລາທັງໝົດແມ່ນ 1 ສົກຮຽນ ເລີ້ມແຕ່ເດືອນກັນຍາປີ 2020 ຫາ ເດືອນພຶດສະພາ ປີ 2021.

*3.4 ການວິເຄາະຂໍ້ມູນ ແລະ ສະຖິຕິທີ່ໃຊ້ໃນການຄົ້ນຄ້ວາ*

ການວິເຄາະຂໍ້ມູນແມ່ນໃຊ້ໂປຣແກຣມຄອມພິວເຕີສຳເລັດຮູບ Excel ຄື: 1) ວິເຄາະສະຖານະພາບທົ່ວໄປໂດຍໃຊ້ຄ່າສະເລ່ຍສ່ວນຮ້ອຍ ຫຼື ເປີເຊັນ (%), 2) ວິເຄາະລະດັບຄວາມຄິດເຫັນແຕ່ລະດ້ານໂດຍຫາຄ່າສະເລ່ຍ ($\bar{X}$) ແລະ ຫາຄ່າຜັນ ປ່ຽນມາດຕະຖານ (S.D) ໂດຍ ກຳນົດເກນຄ່າສະເລ່ຍ ແລະ 3) ວິເຄາະແບບສອບຖາມປາຍເປີດໂດຍໃຊ້ວິທີວິເຄາະເນື້ອໃນໂດຍຈັດລະດັບຄວາມຖີ່.

## 4. ຜົນການຄົ້ນຄວ້າ

*4. 1 ຂໍ້ມູນພື້ນຖານຂອງກຸ່ມຕົວຢ່າງ*

ກຸ່ມຕົວຢ່າງທັງໝົດມີ 214 ຄົນ, ນັກຮຽນມີ 176 ຄົນ, ເທົ່າກັບ 82.24%, ຄູສອນຄະນິດສາດມີ 27 ທ່ານ, ເທົ່າກັບ 12.62%, ຜູ້ບໍລິຫານມີ 11 ທ່ານ, ເທົ່າກັບ 5.14 %. ວຸດທິການສຶກສາຂອງຜູ້ບໍລິຫານຈົບວິຊາສະເພາະຄູຊັ້ນສູງມີ 6 ທ່ານ, ເທົ່າກັບ 54.54 %, ຈົບວິຊາສະເພາະຄູປະລິນຍາຕີມີ 5 ທ່ານ, ເທົ່າກັບ 45.45 %. ຄູສອນຄະນິດສາດຈົບວິຊາສະເພາະຄູຊັ້ນສູງມີ 20 ທ່ານ, ເທົ່າກັບ 74.07 %, ຄູສອນຄະນິດສາດທີ່ຈົບວິຊາສະເພາະຄູປະລິນຍາຕີມີ 7 ທ່ານ, ເທົ່າກັບ 25.92 %. ປະສົບການໃນການເຮັດວຽກຂອງຜູ້ບໍລິຫານແມ່ນ 11 ປີ ຂຶ້ນໄປ 100%. ປະສົບການໃນການເຮັດວຽກຂອງຄູສອນຄະນິດສາດມີປະສົບການແຕ່ 5 -10 ປີ ມີ 19 ທ່ານ, ເທົ່າກັບ 70.63%, ມີປະສົບການເຮັດວຽກແຕ່ 11 ປີຂຶ້ນໄປມີ 8 ທ່ານເທົ່າກັບ 29.63%, ສ່ວນປະສົບການເຮັດວຽກຕໍ່າກວ່າ 5 ປີແມ່ນບໍ່ມີ.

*4.2 ຜົນການວິເຄາະຄວາມຄິດເຫັນຂອງຜູ້ບໍລິການໂຮງຮຽນໂດຍລວມ*

ຕາຕະລາງທີ 1: ຄວາມຄິດເຫັນໂດຍລວມຂອງຜູ້ບໍລິຫານໂຮງຮຽນ

| ລ/ດ | ການບໍລິຫານແຕ່ລະດ້ານ | ຄ່າສະຖິຕິ | | | |
|---|---|---|---|---|---|
| | | $\bar{X}$ | $S.D$ | ແປຜົນ | ຈັດລຳດັບ |
| 1 | ດ້ານການບໍລິຫານວິຊາການ | 3.09 | 0.72 | ປານກາງ | 6 |
| 2 | ດ້ານການບໍລິຫານວຽກງານການເງິນ | 3.27 | 0.82 | ປານກາງ | 5 |
| 3 | ດ້ານການບໍລິຫານວຽກງານບຸກຄະລາກອນ | 4.55 | 0.60 | ຫຼາຍທີ່ສຸດ | 1 |
| 4 | ດ້ານການບໍລິຫານວຽກງານກິດຈະການນັກຮຽນ | 4.02 | 0.59 | ຫຼາຍ | 4 |
| 5 | ດ້ານການບໍລິຫານວຽກອາຄານສະຖານທີ່ | 4.30 | 0.62 | ຫຼາຍ | 2 |
| 6 | ການບໍລິຫານວຽກງານຊຸມຊົນ | 4.03 | 0.67 | ຫຼາຍ | 3 |
| ***ລວມ*** | | ***3.88*** | ***0.67*** | ***ຫຼາຍ*** | |

ຈາກຕາຕະລາງ 1 ພົບວ່າຄວາມຄິດເຫັນໂດຍລວມແລ້ວແມ່ນຢູ່ໃນລະດັບຫຼາຍມີຄ່າສະເລ່ຍເທົ່າ 3.88, ຄ່າຜັນປ່ຽນມາດຖານເທົ່າ 0.67 ໃນນີ້ພົບວ່າຄວາມຄິດເຫັນຫຼາຍທີ່ສຸດແມ່ນວຽກງານດ້ານການບໍ່ລິຫານບຸກຄະລາກອນຄວາມຄິດເຫັນຢູ່ໃນລະດັບຫຼາຍທີ່ສຸດເຊິ່ງມີຄ່າສະເລ່ຍ 4.55 ແລະ ຄ່າຜັນປ່ຽນມາດຖານເທົ່າ 0.60, ຮອງລົງມາແມ່ນດ້ານການບໍລິຫານວຽກງານອາຄານສະຖານທີ່ຄວາມຄິດເຫັນຢູ່ໃນລະດັບຫຼາຍເຊິ່ງມີຄ່າສະເລ່ຍເທົ່າ 4.30 ແລະ ຄ່າຜັນປ່ຽນມາດຖານເທົ່າ 0.62 ແລະອັນດັບສຸດທ້າຍແມ່ນດ້ານການບໍລິຫານວິຊາການມີຄວາມຄິດເຫັນໃນລະດັບປານກາງເຊິ່ງມີຄ່າສະເລ່ຍເທົ່າ 3.09 ແລະ ຄ່າຜັນປ່ຽນມາດຖານເທົ່າ 0.72.

*4.3 ຜົນການວິເຄາະຂໍ້ສະເໜີຂອງຜູ້ບໍລິຫານໂຮງຮຽນມັດທະຍົມສຶກສາຕອນຕົ້ນເມືອງແປກ*

ຈາກຂໍ້ສະເໜີຂອງຜູ້ບໍລິຫານໂຮງຮຽນໃນການບໍລິຫານໂຮງຮຽນສັງລວມແລ້ວມີ 5 ບັນຫາໃຫຍ່ໆໂດຍຈັດຕາມລຳດັບຄວາມຖີ່ຂອງຂໍ້ສະເໜີພົບວ່າມີຄ່າສະເໜີຫຼາຍກວ່າໝູ່ແມ່ນດ້ານບຸກຄະລາກອນ, ຮອງລົງມາແມ່ນດ້ານການເຝິກອົບຮົມຄູ ແລະອັນດັບສຸດທ້າຍແມ່ນດ້ານສະພາບແວດລ້ອມອ້ອມຂ້າງ ແລະອາຄານສະຖານທີ່ເຊິ່ງຈັດຕາມລຳດັບຄື: ອັນດັບທີ່ 1 ດ້ານບຸກຄະລາກອນ, ອັນດັບທີ່ 2 ດ້ານການເຝິກອົບຮົມ, ອັນດັບທີ່ 3 ດ້ານອຸປະກອນການຮຽນ-ການສອນ, ອັນດັບທີ່ 4 ດ້ານງົບປະມານ ແລະ ອັນດັບທີ່ 5 ດ້ານສະພາບແວດລ້ອມອ້ອມຂ້າງ ແລະ ອາຄານສະຖານທີ່.

*4.4 ຜົນການວິເຄາະຄວາມຄິດເຫັນຂອງຄູສອນຄະນິດສາດໂດຍລວມ*

ຕາຕະລາງທີ 2 : ສະພາບຄວາມຄິດເຫັນຂອງຄູສອນຄະນິດສາດ

| ລ/ດ | ການຈັດການຮຽນ-ການສອນວິຊາຄະນິດສາດ | ຄ່າສະຖິຕິ | | | |
|---|---|---|---|---|---|
| | | $\bar{X}$ | $S.D$ | ແປຜົນ | ຈັດລຳດັບ |
| 1 | ຮູບແບບການຈັດການຮຽນ-ການສອນວິຊາຄະນິດສາດ | 4.30 | 0.51 | ຫຼາຍ | 1 |
| 2 | ຄວາມສຳພັນລະຫວ່າງຄູສອນຄະນິດສາດກັບນັກຮຽນ | 3.98 | 0.67 | ຫຼາຍ | 2 |
| 3 | ພຶດຕິກຳຂອງນັກຮຽນຕໍ່ກັບວິຊາຄະນິດສາດໃນໄລຍະຜ່ານມາ | 3.61 | 0.66 | ຫຼາຍ | 4 |
| 4 | ການສ້າງແຮງຈູງໃຈເພື່ອໃຫ້ນັກຮຽນມີຄວາມສົນໃຈຕໍ່ກັບວິຊາຄະນິດສາດ | 3.86 | 0.52 | ຫຼາຍ | 3 |
| 5 | ການສົ່ງເສີມ ຫຼື ຊຸກຍູ້ໃຫ້ນັກຮຽນໄດ້ມີການຄົ້ນຄວ້າວິຊາຄະນິດສາດຕາມແຫຼ່ງຂໍ້ມູນຕ່າງໆ | 3.56 | 0.95 | ຫຼາຍ | 5 |
| 6 | ຄູຄະນິດສາດໄດ້ຈັດການຮຽນ-ການສອນພິເສດໃຫ້ນັກຮຽນທີ່ມັກຮຽນຄະນິດສາດ | 3.25 | 1.01 | ປານກາງ | 6 |
| ***ລວມ*** | | ***3.76*** | ***0.72*** | ***ຫຼາຍ*** | |

ຈາກຕາຕະລາງ 2: ພົບວ່າຄວາມຄິດເຫັນຂອງຄູສອນຄະນິດສາດກ່ຽວກັບສະພາບການຈັດການຮຽນ-ການສອນຄະນິດສາດເຫັນວ່າໂດຍລວມແລ້ວແມ່ນຢູ່ໃນລະດັບຫຼາຍເຊິ່ງມີຄ່າສະເລ່ຍເທົ່າກັບ 3.76 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 0.72. ເມື່ອພິຈາລະນາໃນແຕ່ລະດ້ານແລ້ວເຫັນວ່າຄວາມຄິດເຫັນຢູ່ໃນລະດັບຫຼາຍກວ່າໝູ່ແມ່ນດ້ານຮູບແບບການຈັດການຮຽນ-ການສອນວິຊາຄະນິດສາດຈັດຢູ່ໃນລະດັບຫຼາຍເຊິ່ງມີຄ່າສະເລ່ຍເທົ່າ 4.30 ແລະ ຄ່າຜັນປ່ຽນມາດຖານເທົ່າ 0.51, ຮອງລົງມາແມ່ນດ້ານຄວາມສຳພັນລະຫວ່າງຄູສອນຄະນິດສາດກັບນັກຮຽນຈັດຢູ່ໃນລະດັບຫຼາຍເຊິ່ງມີຄ່າສະເລ່ຍເທົ່າ 3.98 ແລະ ຄ່າຜັນປ່ຽນມາດຖານເທົ່າ 0.67 ແລະ ສຸດທ້າຍແມ່ນດ້ານຄູຄະນິດສາດໄດ້ຈັດການຮຽນ-ການສອນພິເສດໃຫ້ນັກຮຽນທີ່ມັກຮຽນຄະນິດສາດ ຈັດຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍເທົ່າ 3.25 ແລະ ຄ່າຜັນປ່ຽນມາດຖານເທົ່າ 1.01.

*4.5 ຜົນການວິເຄາະຂໍ້ສະເໜີຂອງຄູສອນຄະນິດສາດ*

ຈາກຂໍ້ສະເໜີຂອງຄູສອນຄະນິດສາດໂຮງຮຽນມັດທະຍົມສຶກສາຕອນຕົ້ນເມືອງແປກໃນການຮຽນ-ການສອນສັງລວມແລ້ວມີຢູ່ 3 ບັນຫາໃຫຍ່ໆໂດຍຈັດຕາມລຳດັບຄວາມຖີ່ຂອງຂໍ້ສະເໜີພົບວ່າມີຄຳສະເໜີຫຼາຍກວ່າໝູ່ແມ່ນດ້ານອຸປະກອນການຮຽນ-ການສອນ , ຮອງລົງມາແມ່ນດ້ານເນື້ອໃນປຶ້ມແບບຮຽນ ແລະ ອັນດັບສຸດທ້າຍແມ່ນດ້ານອາຄານສະຖານທີ່ເຊິ່ງຈັດຕາມລຳດັບຄື: 1) ດ້ານອຸປະກອນການຮຽນ-ການສອນ, 2) ດ້ານເນື້ອໃນປຶ້ມແບບຮຽນ ແລະ 3) ດ້ານອາຄານສະຖານທີ່: ອາຄານບໍ່ພຽງພໍ, ຫ້ອງຮຽນບໍ່ທັນເໝາະສົມກັບການສອນໂດຍເນັ້ນນັກຮຽນເປັນສູນກາງ, ຫ້ອງຮຽນຊຸດໂຊມ, ໂຕະຕັ່ງຊຸດໂຊມ, ກະດານດຳຍັງບໍ່ທັນພຽງພໍສິ່ງທີ່ມີແລ້ວກໍ່ຊຸດໂຊມຫຼາຍແລ້ວ.

*4.4 ຜົນການວິເຄາະຄວາມຄິດເຫັນຂອງນັກຮຽນໂດຍລວມ*

ຕາຕະລາງທີ 3: ຄວາມຄິດເຫັນຂອງນັກຮຽນ

| ລ/ດ | ການຈັດການຮຽນ-ການສອນຄະນິດສາດ | ຄ່າສະຖິຕິ | | | |
|---|---|---|---|---|---|
| | | $\bar{X}$ | $S.D$ | ແປຜົນ | ຈັດລຳດັບ |
| 1 | ຄຸນລັກສະນະຂອງຜູ້ສອນ | 4.04 | 0.84 | ຫຼາຍ | 2 |
| 2 | ບຸກຄະລິກ ແລະ ພຶດຕິກຳການສອນ | 3.66 | 0.90 | ຫຼາຍ | 7 |
| 3 | ຄວາມສຳພັນລະຫວ່າງຄູສອນຄະນິດສາດກັບຜູ້ຮຽນ | 3.96 | 0.9 | ຫຼາຍ | 3 |
| 4 | ທັດສະນະຄະຕິຂອງນັກຮຽນຕໍ່ກັບຄູສອນຄະນິດສາດ | 3.90 | 0.89 | ຫຼາຍ | 5 |
| 5 | ທັດສະນະຄະຕິຂອງນັກຮຽນຕໍ່ກັບວິຊາຄະນິດສາດ | 4.16 | 0.80 | ຫຼາຍ | 1 |
| 6 | ແຮງຈູງໃຈເພື່ອເຮັດໃຫ້ມີຜົນສຳເລັດ | 3.95 | 0.91 | ຫຼາຍ | 4 |
| 7 | ພຶດຕິກຳໃນການຮຽນຂອງນັກຮຽນ | 3.64 | 0.97 | ຫຼາຍ | 8 |
| 8 | ການຄົ້ນຄວ້າຮ່ຳຮຽນເພີ່ມເຕີມ | 3.34 | 1.04 | ປານກາງ | 11 |
| 9 | ສະພາບແວດລ້ອມ ກຸ່ມໝູ່ເພື່ອນ | 3.54 | 1.01 | ປານກາງ | 9 |
| 10 | ສະພາບແວດລ້ອມທາງດ້ານອຸປະກອນການຮຽນການສອນ | 3.44 | 1.09 | ປານກາງ | 10 |
| 11 | ສະພາບແວດລ້ອມພາຍໃນໂຮງຮຽນ | 3.73 | 0.99 | ຫຼາຍ | 6 |
| ***ລວມ*** | | ***3.78*** | ***0.94*** | ***ຫຼາຍ*** | |

ຈາກຕາຕະລາງ 3 ພົບວ່າພົບວ່າຄວາມຄິດເຫັນຂອງນັກຮຽນກ່ຽວກັບສະພາບການຈັດການຮຽນ-ການສອນຄະນິດສາດເຫັນວ່າໂດຍລວມແລ້ວແມ່ນຢູ່ໃນລະດັບຫຼາຍເຊິ່ງມີຄ່າສະເລ່ຍເທົ່າກັບ 3.78 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 0.94. ເມື່ອພິຈາລະນາໃນແຕ່ລະດ້ານແລ້ວເຫັນວ່າຄວາມຄິດເຫັນຢູ່ໃນລະດັບຫຼາຍກວ່າໝູ່ແມ່ນທັດສະນະຄະຕິຂອງນັກຮຽນຕໍ່ກັບວິຊາຄະນິດສາດຈັດຢູ່ໃນລະດັບຫຼາຍເຊິ່ງມີຄ່າສະເລ່ຍເທົ່າ 4.16 ແລະ ຄ່າຜັນປ່ຽນມາດຖານເທົ່າ 0.80, ຮອງລົງມາແມ່ນຄຸນລັກສະນະຂອງຜູ້ສອນຈັດຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າ 4.04 ແລະ ຄ່າຜັນປ່ຽນມາດຖານເທົ່າ 0.84 ແລະ ອັນດັບສຸດທ້າຍແມ່ນການຄົ້ນຄວ້າຮ່ຳຮຽນເພີ່ມເຕີມຈັດຢູ່ໃນລະດັບປານກາງເຊິ່ງມີຄ່າສະເລ່ຍເທົ່າ 3.34 ແລະ ຄ່າຜັນປ່ຽນມາດຖານເທົ່າ 1.04.

*4.4 ຜົນການວິເຄາະຂໍ້ສະເໜີຂອງນັກຮຽນໂຮງຮຽນມັດທະຍົມສຶກສາຕອນຕົ້ນເມືອງແປກ*

ຈາກຂໍ້ສະເໜີຂອງນັກຮຽນໂຮງຮຽນມັດທະຍົມສຶກສາຕອນຕົ້ນເມືອງແປກສັງລວມແລ້ວມີຢູ່ 4 ບັນຫາໃຫຍ່ໆໂດຍຈັດຕາມລຳດັບຄວາມຖີ່ຂອງຂໍ້ສະເໜີພົບວ່າມີຄຳສະເໜີຫຼາຍກວ່າໝູ່ແມ່ນດ້ານການເຄື່ອນໄຫວວຽກງານນອກຫຼັກສູດ, ຮອງລົງມາແມ່ນດ້ານຄວາມສຳພັນລະຫວ່າງຄູກັບນັກຮຽນ ແລະ ອັນດັບສຸດທ້າຍແມ່ນດ້ານສະພາບແວດລ້ອມຈັດຕາມລຳດັບຄື: 1) ດ້ານ

ການເຄື່ອນໄຫວວຽກງານນອກຫຼັກສູດ, 2) ດ້ານຄວາມສາພັນລະຫວ່າງຄູກັບນັກຮຽນ, 3) ດ້ານການສິດສອນ ແລະ 4) ດ້ານສະພາບແວດລ້ອມ: ຫ້ອງນໍ້າມີໜ້ອຍຫ້ອງ ແລະ ຄວນມີວິທີຮັກສາຄວາມສະອາດກວ່ານີ້ຕື່ມ ແລະ ຄວນປັບປຸງສະພາບແວດລ້ອມໂຮງຮຽນໃຫ້ສະອາດກວ່ານີ້ຕື່ມ.

## 5. ອະພິປາຍຜົນ

ຈາກການຄົ້ນຄວ້າສາມາດອະພິປາຍຜົນໄດ້ດັ່ງນີ້:

*5.1 ຄວາມຄິດເຫັນ ແລະ ຂໍ້ສະເໜີຂອງຜູ້ບໍລິຫານໂຮງຮຽນມັດທະຍົມຕົ້ນ*

1) ຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນ

ຈາກຄວາມຄິດເຫັນຂອງຜູ້ບໍລິຫານໂຮງຮຽນເຫັນວ່າການບໍລິຫານໂຮງຮຽນ ໂດຍລວມແລ້ວຢູ່ໃນລະດັບຫຼາຍໃນນັ້ນ ມີຄວາມຄິດເຫັນຫຼາຍກວ່າໝູ່ແມ່ນທາງດ້ານ “ການບໍລິຫານບຸກຄະລາກອນ” ຢູ່ໃນລະດັບດີຫຼາຍນີ້ກໍ່ອາດເປັນເພາະວ່າໂຮງຮຽນມັດທະຍົມສຶກສາຕອນຕົ້ນເມືອງແປກ ແຂວງຊຽງຂວາງໄດ້ຮັບການຊີ້ນໍາໂດຍກົງຈາກຫ້ອງການສຶກສາທິການ ແລະ ກິລາເມືອງ, ມີຜູ້ບໍລິຫານຮງຮຽນທີ່ມີປະສົບການສູງ, ຄູສອນມີລະບຽບວິໄນ, ຮັກອາຊີບຄູ ແລະ ມີປະສົບການສອນສູງ, ມີກົງຈັກການຈັດຕັ້ງຄົບຊຸດ, ໂຮງຮຽນມີແຜນການພັດທະນາໂຮງຮຽນ, ໂຮງຮຽນຖືເອົາການສຶກສາອົບຮົມດ້ານການເມືອງແນວຄິດເປັນຫຼັກ, ມີລະບົບອາຄານສະຖານທີຄົບຖ້ວນ,ໂຮງຮຽນສົ່ງເສີມໃຫ້ຄູທຸກຄົນເນັ້ນການສອນ ແລະ ພັດທະນາການສອນຂອງຕົນເອງຢູ່ສະເໝີ, ສອດຄ່ອງກັບ ນົງລັກສອນ ເຮືອນທອງ (2007) ຮູບແບບການບໍລິຫານໂຮງຮຽນທີ່ມີປະສິດທິຜົນພົບວ່າ: ການບໍລິຫານໂຮງຮຽນທີ່ມີປະສິດທິຜົນປະກອບມີ *8* ອົງປະກອບຄື 1) ເປັນອົງກອນແຫ່ງການຮຽນຮູ້, 2) ຜູ້ບໍລິຫານ ແລະ ຄູເປັນມືອາຊີບ, 3) ການປະກັນຄຸນນະພາບກວດສອບໄດ້ ແລະ ໜ້າເຊື່ອຖື, 4) ສະພາບແວດລ້ອມເອື້ອອໍານວຍຕໍ່ການຮຽນຮູ້, 5) ການມີວິໄສທັດ ແລະ ຈຸດປະສົງຮ່ວມກັນ, 6) ເນັ້ນການຮຽນ-ການສອນ , 7) ການຮຽນ-ການສອນທີ່ມີຈຸດປະສົງ ແລະ 8) ມີຄວາມຄາດຫວັງຕໍ່ນັກຮຽນສູງ.

ແຕ່ຍັງພົບວ່າ ດ້ານ “ການບໍລິຫານວິຊາການ” ຍັງຕ້ອງໄດ້ເພີ່ມທະວີຄວາມເອົາໃຈໃສ່ຕື່ມເຊິ່ງມີຄວາມຄິດເຫັນຢູ່ໃນລະດັບປານກາງ ນັ້ນກໍ່ອາດເປັນເພາະວ່າໂຮງຮຽນຜູ້ບໍລິຫານສ່ວນຫຼາຍຍັງບໍ່ໄດ້ຍົກລະດັບວິຊາສະເພາະຍາງຕໍ່ເນື່ອງ ແລະ ຝຶກອົບຮົມທາງດ້ານການບໍລິຫານໂຮງຮຽນບໍ່ເປັນປົກກະຕິ, ງົບປະມານທາງດ້ານການເງິນຍັງບໍ່ພຽງພໍເຮັດໃຫ້ໂຮງຮຽນບໍ່ໄດ້ຈັດການເຝິກອົບຮົມການສອນ ຫຼື ນິເທດພາຍໃນໃຫ້ຄູເປັນປົກກະຕິ, ການສະໜອງອຸປະກອນການຮຽນ-ການສອນບໍ່ໄດ້ຕາມຄວາມຕ້ອງການ.

2) ຂໍ້ສະເໜີຂອງຜູ້ບໍລິຫານຂອງໂຮງຮຽນ

ຈາກຂໍ້ສະເໜີຂອງຜູ້ບໍລິຫານເຫັນວ່າ ຜູ້ບໍລິຫານໂຮງຮຽນຍັງມີຄວາມຕ້ອງການຫຼາຍດ້ານເພື່ອສະໜັບສະໜູນເຂົ້າໃນການບໍລິຫານໂຮງຮຽນ ຈາກຂໍ້ສະເໜີດັ່ງກ່າວຂອງຜູ້ບໍລິຫານໂຮງຮຽນ ເຊິ່ງຈັດຕາມລໍາດັບຄວາມຖີ່ໃນການສະເໜີພົບວ່າມີຄໍາສະເໜີຫຼາຍກວ່າໝູ່ແມ່ນດ້ານ “ບຸກຄະລາກອນ” ເຊັ່ນວ່າ ໂຮງຮຽນຍັງຂາດຄູວິຊາໄອຊີທີ, ຄູສອນວິຊາພະລະສຶກສາ ແລະ ຄູສອນວິຊາສິລະປະດົນຕີ, ຄູສອນຄະນິດສາດຍັງໄດ້ສອນຫຼາຍຊົ່ວໂມງເກີນຕາມການກໍານົດຂອງກະຊວງສຶກສາທິການ ແລະ ກິລາວາງອອກ ບັນຫານີ້ກໍ່ອາດເປັນເພາະວ່າໃນປັດຈຸບັນພັກ ແລະ ລັດຖະບານພວກເຮົາກໍາລັງປັບປຸງຄຸນນະພາບຂອງພະນັກງານລັດຖະກອນຢູ່ໃນ ສປປ ລາວ ລັດຖະບານໄດ້ຫຼຸດຈໍານວນໂກຕາລັດຖະກອນລົງໃນແຕ່ລະປີໂດຍມີຈຸດປະສົງເພື່ອໃຫ້ແຕ່ລະຂະແໜງການຂອງລັດໄດ້ມີບຸກຄະລາກອນທີ່ມີປະສິດທິພາບ, ສາມາດເຮັດວຽກໄດ້ຫຼາຍ. ດັ່ງນັ້ນ, ຂະແໜງການສຶກສາກໍ່ໄດ້ຮັບຜົນກະທົບຫຼາຍສົມຄວນໂດຍສະເພາະແມ່ນໂຮງຮຽນມັດທະຍົມທີ່ມີຄູສອນຈໍານວນໜຶ່ງໄດ້ເຂົ້າຮັບອຸດໜູນບໍານານ, ຍົກຍ້າຍໄປຂະແໜງການອື່ນ ແຕ່ການທີ່ຈະຈະຊັບຊ້ອນລັດຖະກອນເຂົ້າມາທົດແທນພັດມີໜ້ອຍອີກບັນຫາໜຶ່ງເມື່ອຮັບລັດຖະກອນໜ້ອຍກໍ່ຈະເຮັດໃຫ້ບາງວິຊາບໍ່ທັນມີຄູສອນ.

ສ່ວນດ້ານ “ສະພາບແວດລ້ອມອ້ອມຂ້າງອາຄານສະຖານທີ່”ເປັນຄໍາສະເໜີໜ້ອຍກວ່າໝູ່ ເຊັ່ນວ່າ ສະຖານທີ່ໂຮງຮຽນຍັງຄັບແຄບບໍ່ທັນພຽງພໍກັບຄວາມຕ້ອງການ, ອາຄານຮຽນຍັງບໍ່ພຽງພໍຈໍານວນນັກຮຽນເຮັດໃຫ້ນັກຮຽນແອອັດ ບັນຫາທີ່ມີຄໍາສະເໜີໜ້ອຍນີ້ກໍ່ອາດເປັນເພາະວ່າ ພື້ນຖານໂຄງຮ່າງຂອງໂຮງຮຽນມັດທະຍົມຕອນຕົ້ນສ່ວນຫຼາຍແມ່ນໄດ້ຮັບທຶນການກໍ່ສ້າງເປັນພື້ນຖານຫຼາຍແລ້ວ ຍັງມີພຽງແຕ່ໂຮງຮຽນມັດທະຍົມຕົ້ນຈໍານວນໜຶ່ງທີ່ສ້າງຕັ້ງຂຶ້ນໃໝ່ຍັງບໍ່ທັນໄດ້ຮັບທຶນການກໍ່ສ້າງຍັງໃຊ້ອາຄານຊົ່ວຄາວຢູ່.

*5.2 ຄວາມຄິດເຫັນ ແລະ ຂໍ້ສະເໜີຂອງຄູສອນຄະນິດສາດໃນໂຮງຮຽນມັດທະຍົມຕົ້ນ*

1) ຄວາມຄິດເຫັນຂອງຄູສອນຄະນິດສາດ

ຈາກຄວາມຄິດໃນເລື່ອງການຈັດການຮຽນ-ການສອນຂອງຄູສອນຄະນິດສາດມີຄວາມຄິດເຫັນທີ່ຫຼາຍກວາໝູ່ແມ່ນດ້ານ “ຮູບແບບການຈັດການຮຽນ-ການສອນຄະນິດສາດ” ນັ້ນກໍ່ອາດເປັນເພາະວ່າ ຄູສອນຄະນິດສາດທຸກຄົນມີຄວາມເອົາໃຈໃສ່ຕໍ່ກັບການສອນ, ມີນໍ້າໃຈຮັກອາຊີບຄູ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່, ໃນການສອນຄູສອນຄະນິດສາດໄດ້ອີງໃສ່ຫຼັກສູດການສອນຂອງກະຊວງສຶກສາທິການ ແລະ ກິລາວາງອອກຢ່າງເຂັ້ມງວດ,

ສອນຕາມຂັ້ນຕອນຂອງການສອນທີ່ໄດ້ກຳນົດໄວ້, ຄູໄດ້ກະກຽມແຜນການສອນອຸປະກອນການສອນຢ່າງຄົບຖ້ວນ ແລະ ເໝາະສົມກ່ອນຂຶ້ນຫ້ອງສອນເຊິ່ງສອດຄ່ອງກັບ ວິມົນວັນ ມີບຸນ (2014) ພຶດຕິກຳການສອນຄະນິດສາດຂອງຄູທີ່ໄດ້ຮັບຖານະທາງດ້ານວິຊາການລະດັບມັດທະຍົມສຶກສາ ພົບວ່າ: *1)* ຄູມີການກຽມການສອນເໝາະສົມກັບຈຸດໝາຍຂອງຫຼັກສູດ, ການສຶກສາ ແລະ ວິເຄາະຫຼັກສູດ, *2)* ຄູມີການສອນຕາມລຳດັບຂັ້ນຈາກການທົບທວນຄວາມຮູ້ພື້ນຖານເດີມໄປສູ່ການສອນເນື້ອໃນໃໝ່, ສະເໜີເນື້ໃນບົດຮຽນເໝາະສົມກັບລະດັບຜູ້ຮຽນ, ອະທິບາຍບົດຮຽນໄດ້ຈະແຈ້ງ, ກວດສອບຄວາມເຂົ້າໃຈເນື້ອໃນໃໝ່ຂອງນັກຮຽນ ແລະ ໃຫ້ນັກຮຽນໄດ້ເຝິກທັກສະ ແລະ 3) ຄູມີການໃຊ້ສື່ການສອນທີ່ມີຂະໜາດເໝາະສົມກັບຊ່ວງອາຍຸ ແລະ ຂັ້ນຮຽນ

ແຕ່ຍັງພົບວ່າ ດ້ານ "ຄູຄະນິດສາດໄດ້ຈັດການຮຽນ-ການສອນພິເສດໃຫ້ນັກຮຽນທີ່ມັກຮຽນຄະນິດສາດ" ຍັງຕ້ອງໄດ້ເພີ່ມທະວີຄວາມເອົາໃຈໃສ່ຕື່ມອີກ ເຊິ່ງມີຄວາມຄິດເຫັນຢູ່ໃນລະດັບປານກາງ ນີ້ກໍ່ອາດເປັນເພາະວ່າ ຄູສອນຄະນິດສາດໄດ້ສອນຫຼາຍຊົ່ວໂມງ, ນອກຈາກສອນຄະນິດສາດແລ້ວຍັງໄດ້ເຮັດວຽກບໍລິຫານອື່ນໆເຊັ່ນວຽກອົງການຈັດຕັ້ງມະຫາຊົນ, ວຽກເຄື່ອນໄຫວນອກຫຼັກສູດ ແລະ ຄູຈຳນວນໜຶ່ງຍັງໄດ້ສອນວິຊາອື່ນອີກເຊັ່ນວ່າ ວິຊາພາລະສຶກສາເຮັດໃຫ້ບໍ່ມີເວລາສອນເພີ່ມໃຫ້ນັກຮຽນ ແລະ ອີກຢ່າງໜຶ່ງກໍ່ອາດເປັນເພາະວ່າສະພາບແວດລ້ອມທີ່ບັງຄັບໃຫ້ຄູຕ້ອງໄດ້ໃຊ້ເວລານອກຈາການສອນໄປເຮັດວຽກເສີມອື່ນໆເພື່ອຫາລາຍໄດ້ເພີ່ມໃສ່ຄອບຄົວເຊັ່ນວ່າ ເຮັດນາ, ເຮັດສວນ ແລະ ເຮັດທຸລະກິດອື່ນໆອີກ.

2) ຂໍສະເໜີຂອງຄູສອນຄະນິດສາດ

ຈາກຂໍ້ສະເໜີຂອງຄູສອນຄະນິດສາດ ເຫັນວ່າ ຄູສອນຄະນິດສາດ ພົບວ່າມີຄຳສະເໜີຫຼາຍກວ່າໝູ່ແມ່ນດ້ານ "ອຸປະກອນການຮຽນ-ການສອນ" ບັນຫາດັ່ງກ່າວນີ້ກໍ່ອາດເປັນເພາະວ່າ ການຕອບສະໜອງທາງດ້ານອຸປະກອນການຮຽນ-ການສອນຂອງພາກສ່ວນທີ່ກ່ຽວຂ້ອງຍັງບໍ່ທັນພຽງພໍທົ່ວເຖິງໂດຍສະເພາະແມ່ນທາງກະຊວງສຶກສາທິການ ແລະ ກິລາ ຍັງບໍ່ທັນຕອບສະໜອງທາງດ້ານອຸປະກອນການຮຽນ-ການສອນໃຫ້ແກ່ພະແນກສຶກສາທິການ ແລະ ກິລາແຂວງ ເພື່ອແຈກຢາຍໃຫ້ແກ່ບັນດາໂຮງຮຽນມັດທະຍົມໃນຂອບເຂດຮັບຜິດຊອບ ເຊັ່ນວ່າ: ສື່ການຮຽນ-ການສອນຄະນິດສາດ, ປຶ້ມແບບຮຽນຄະນິດສາດ, ຄູ່ມືຄູຄະນິດສາດ, ປຶ້ມແກ້ກິດຈະກຳ ແລະ ແກ້ບົດເຝິກຫັດຄະນິດສາດ.

ເຫັນວ່າດ້ານ "ດ້ານອາຄານສະຖານທີ່" ມີຄຳສະເໜີ ໜ້ອຍກວ່າໝູ່ ບັນຫານີ້ກໍ່ອາດເປັນເພາະວ່າອາຄານສະຖານທີ່ຂອງໂຮງຮຽນມັດທະຍົມແຕ່ລະບ່ອນມີພື້ນຖານໂຄງລາງຂ້ອນຂ້າງຖາວອນໝົດແລ້ວຍັງມີພຽງແຕ່ໂຮງຮຽນຈຳນວນໜຶ່ງທີ່ຫາກໍ່ສ້າງຕັ້ງຂຶ້ນໃໝ່ເຊິ່ງຍັງນຳໃຊ້ອາຄານແບບຊົ່ວຄາວຢູ່ ແລະ ບາງບ່ອນກໍ່ມີອາຄານນຳໃຊ້ມາດົນແລ້ວຈຶ່ງຍັງຕ້ອງການໄດ້ປັບປຸງສ້ອມແປງຄືນໃໝ່ ສະນັ້ນ, ຈຶ່ງເຮັດໃຫ້ມີຄຳສະເໜີບັນຫານີ້ມີໜ້ອຍກວ່າບັນຫາອື່ນ.

*5.3 ຄວາມຄິດເຫັນ ແລະ ຂໍ້ສະເໜີຂອງນັກຮຽນມັດທະຍົມຕົ້ນ*

1) ຄວາມຄິດເຫັນຂອງນັກຮຽນ

ຈາກຄວາມຄິດເຫັນຂອງນັກຮຽນຕໍ່ກັບການຈັດການຮຽນ-ການສອນຄະນິດສາດເຫັນວ່າ ໂດຍລວມແລ້ວແມ່ນຢູ່ໃນລະດັບຫຼາຍໃນນັ້ນພົບວ່າຄວາມຄິດເຫັນຫຼາຍກວ່າໝູ່ແມ່ນດ້ານ "ທັດສະນະຄະຕິຂອງນັກຮຽນຕໍ່ກັບວິຊາຄະນິດສາດ" ທີ່ມີຄວາມຄິດເຫັນຢູ່ໃນລະດັບຫຼາຍນີ້ກໍ່ອາດເປັນເພາະວ່າວິຊາຄະນິດສາດເປັນວິຊາທີ່ມີຄວາມສຳຄັນຫຼາຍ ແລະ ເປັນໜຶ່ງໃນວິຊາຫຼັກຢູ່ໃນໂຮງຮຽນ, ນັກຮຽນຈຶ່ງໄດ້ເອົາໃຈໃສ່ການຮຽນຄະນິດສາດມາແຕ່ຊັ້ນປະຖົມເຮັດໃຫ້ນັກຮຽນມີຄວາມຮູ້ພື້ນຖານແໜ້ນໜາພໍສົມຄວນມາຢູ່ໃນຊັ້ນມັດທະຍົມຕົ້ນ, ອີກອັນໜຶ່ງກໍ່ອາດເປັນເພາະວ່າວິຊາຄະນິດສາດເປັນວິຊາໜຶ່ງທີ່ສາມາດນຳໃຊ້ເຂົ້າໃນການແກ້ໄຂຊີວິດປະຈຳວັນໄດ້ ແລະ ເວລາສອນຄູກໍ່ໄດ້ນຳໃຊ້ສື່ການຮຽນ-ການສອນເພື່ອໃຫ້ນັກຮຽນໄດ້ເຫັນເປັນຮູບປະທຳ ແລະ ໄດ້ປະຕິບັດຕົວຈິງ ສະນັ້ນ, ມັນຈຶ່ງສອດຄ່ອງກັບ ສົມລວຍ ສຸຕິຍະໄທ (1998) ໄດ້ສຶກສາຮູບແບບຂອງຜົນການຮຽນວິຊາຄະນິດສາດຊັ້ນໄດຍົມສຶກ ສາ ປີທີ *3* ຂອງ ສປປ ລາວ ຜົນການຄົ້ນຄວ້າພົບວ່າ ຮູບແບບຂອງຜົນການຮຽນວິຊາຄະນິດສາດຊັ້ນມັດຍົມ ປີທີ *3* ຂອງ ສປປ ລາວປະກົດດັ່ງນີ້ ຕົວປ່ຽນທີ່ມີອິດທິພົນໃນຮູບທີ່ເປັນສາເຫດໂດຍທາງກົງ ແລະ ທາງອ້ອມຕໍ່ ຜົນການຮຽນວິຊາຄະນິດສາດໄດ້ແກ່ຄວາມຖະນັດທາງການຮຽນຄະນິດສາດຕົວປ່ຽນທີ່ມີອິດທິພົນໃນຮູບ ທີ່ເປັນສາເຫດໂດຍທາງກົງຕໍ່ຜົນສຳເລັດທີ່ທາງການຮຽນວິຊາຄະນິດສາດໄດ້ແກ່ຄວາມຮູ້ພື້ນຖານເດີມ. ອີກອັນໜຶ່ງນັກຮຽນທີ່ມີທັດສະນະຄະຕິຕໍ່ການຮຽນຄະນິດສາດດີກໍ່ອາດເປັນເພາະວ່າຄູສອນຢູ່ໃນໂຮງຮຽນມັດທະຍົມຕົ້ນເມືອງແປກທຸກຄົນໄດ້ເອົາໃຈໃສ່ໃຫ້ຄວາມສຳຄັນ ແລະ ອຳນວຍຄວາມສະດວກໃຫ້ແກ່ນັກຮຽນໃນການຄົ້ນຄວ້າຮ່ຳຮຽນທັງຢູ່ໃນຫ້ອງຮຽນ ແລະ ນອກຫ້ອງຮຽນບໍ່ວ່າວິຊາຄະນິດສາດກໍ່ຄືວິຊາອື່ນໆ, ພ້ອມນີ້ພໍ່ແມ່ຜູ້ປົກຄອງນັກຮຽນກໍ່ເຂົ້າໃຈ ແລະ ຄວາມສຳຄັນຂອງການສຶກສາຈຶ່ງໄດ້ສະໜັບສະໜູນໃຫ້ລູກຫຼານຂອງຕົນໄດ້ເອົາໃຈໃສ່ຕໍ່ການຄົ້ນຄວ້າຮ່ຳຮຽນ ສອດຄ່ອງກັບ ນ້ຳເພັດ ສິນທອງ (*1998*) ໄດ້ກ່າວວ່າ ອິດທິພົນທີ່ມີຜົນຕໍ່ການຮຽນຮູ້ໄດ້ແກ່ພັນທຸກຳ ແລະ ສິ່ງແວດລ້ອມສະຫຼຸບໄດ້ວ່າ ອົງປະກອບທີ່ມີອິດທິພົນຕໍ່ຜົນສຳເລັດທາງການຮຽນຂອງເດັກຈະ ຕ້ອງປະກອບດ້ວຍສະຕິປັນຍາຂອງເດັກສິ່ງ ແວດລ້ອມທາງຄອບຄົວເຊິ່ງໝາຍເຖິງ ການທີ່ເດັກໄດ້ຮັບ ຄວາມຮັກເອົາໃຈໃສ່ຈາກຄອບຄົວທາງສັງຄົມໄດ້ແກ່ຢູ່ໃນສັງຄົມແຫ່ງການຮຽນຮູ້ບໍ່ແມ່ນສັງຄົມທີ່ມີແຕ່ ບັນຫາບໍ່ວ່າຈະເປັນບັນຫາຢາເສບຕິດ ຫຼືບັນຫາຄອບຄົວ ຕະຫຼອດຈົນຂະບວນການຮຽນ-ການສອນໃນໂຮງຮຽນເຊິ່ງຖ້າຫາກພໍ່ແມ່ ແລະຄູເບິ່ງແຍງເອົາໃຈໃສ່ໃຫ້ເດັກ

ຈະເລີນເຕີບໂຕພັດທະນາທາງຮ່າງກາຍ ຈິດໃຈ ແລະ ເສີມສະຕິປັນຍາທີ່ຖືກທິດທາງເດັກກໍຈະເລີນເຕີບໂຕພ້ອມກັບຄວາມສໍາເລັດໃນດ້ານການ ຮຽນ ແລະ ໃນທີ່ສຸດກໍຈະກາຍເປັນຄົນດີ ແລະ ຮັບຜິດຊອບໃນສັງຄົມຕໍ່ໄປ.

ນອກຈາກນີ້ຍັງພົບວ່າບັນຫາທີ່ຄວນເອົາໃຈໃສ່ກໍ່ຄື "ການຄົ້ນຄວ້າຮໍ່າຮຽນເພີ່ມເຕີມຂອງນັກຮຽນ" ມີຄວາມຄິດເຫັນຢູ່ໃນລະດັບປານກາງນີ້ກໍ່ອາດເປັນເພາະວ່ານັກຮຽນໃນຊັ້ນມັດທະຍົມຕົ້ນຍັງບໍ່ທັນຮູ້ວິທີໃນການຄົ້ນຄວ້າຮໍ່າຮຽນດ້ວຍຕົນເອງ ອີກສ່ວນໜຶ່ງກໍ່ອາດເປັນຍອນຄູສອນ ແລະ ພໍ່ແມ່ຜູ້ປົກຄອງເດັກຍັງບໍ່ທັນໄດ້ເອົາໃຈໃສ່ໃນການກະຕຸກຊຸກຍູ້ການຮຽນດ້ວຍຕົນເອງຂອງນັກຮຽນ, ການສອນເພີ່ມຂອງຄູກໍ່ຍັງບໍ່ທັນໄດ້ປະຕິບັດໄດ້ເທົ່າທີ່ຄວນ, ຄູສອນຍັງບໍ່ທັນໃຫ້ວຽກບ້ານ ແລະ ກວດວຽກບ້ານນັກຮຽນເປັນປົກກະຕິ, ບັນຫາໜຶ່ງກໍ່ອາດເປັນເພາະວ່າໃນປັດຈຸບັນສາພາບສັງຄົມມີການພັດທະນາໃນຫຼາຍດ້ານເຮັດໃຫ້ມີຜົນກະທົບໂດຍກົງຕໍ່ການຮຽນຂອງນັກຮຽນເຊັ່ນວ່ານັກຮຽນຕິດຫຼິ້ນໂທລະສັບ(ຕິດເກມ), ຄອບຄົວນັກຮຽນຕ້ອງການແຮງງານຊ່ວຍເຫຼືອຄອບຄົວໃນການທໍາການຜະລິດ, ການຄ້າຂາຍ, ການລ້ຽງສັດ ແລະ ອື່ນໆ.

*2)* ຂໍ້ສະເໜີຂອງນັກຮຽນ

ຈາກຂໍ້ສະເໜີຂອງນັກຮຽນເຫັນວ່າ ນັກຮຽນຍັງມີຄວາມຕ້ອງການຫຼາຍດ້ານ "ການເຄື່ອນໄຫວວຽກງານນອກຫຼັກສູດ" ບັນຫານີ້ກໍ່ອາດເປັນເພາະວ່າດ້ານງົບປະມານຂອງໂຮງຮຽນມີຈໍາກັດບໍ່ສາມາດຈັດກິດຈະກໍາຕ່າງໄດ້ຕາມສົມຄວນ, ອີກບັນຫາໜຶ່ງທີ່ສົ່ງຜົນສະທ້ອນໃຫ້ແກ່ການຈັດກິດຈະກໍາຕ່າງໆກໍ່ຄືໃນໄລຍະປີສົກ *2020-2021* ການແຜ່ລະບາດຂອງພະຍາດ *covid-19* ໃນຂອບເຂດທົ່ວປະເທດເຮັດໃຫ້ໂຮງຮຽນຕ່າງໃນທົ່ວປະເທດໄດ້ໂຈະການຮຽນ-ການສອນເປັນເວລາຍາວເປັນແຕ່ລະໄລຍະໂດຍສະເພາະແມ່ນແຂວງຊຽງຂວາງພວກເຮົາການແຜ່ລະບາດຂອງພະຍາດພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ ນີ້ມີການແຜ່ລະບາດເປັນວົງກວ້າງ ແລະ ແຜ່ລະບາດຢູ່ໃນຊຸມຊົນເຮັດໃຫ້ການການຮຽນ-ການສອນບໍ່ສາມາດສອນແບບເຊີງໜ້າໄດ້ ແລະ ທາງຄະນະສະເພາະກິດຂັ້ນແຂວງກໍ່ໄດ້ອອກມາດຕະການເປັນແຕ່ລະໄລຍະໃນຂອບເຂດທົ່ວແຂວງໂດຍສະເພາະແມ່ນໃຫ້ໂຈະການຈັດກິດຈະກໍາຕ່າງໆທີ່ເປັນການສ່ຽງຕໍ່ການແຜ່ລະບາດຂອງພະຍາດດັ່ງກາ◌່ວເຊັ່ນວ່າ ມັນສອດຄ່ອງກັບບາງແຈ້ງການຂອງຄະນະສະເພາະກິດຂັ້ນແຂວງຂອງແຂວງຊຽງຂວາງສະບັບເລກທີ່*117/*ຫວກ ລົງວັນທີ *30* ກັນຍາ *2021* ຢູ່ໃນມາດຕະການຫ້າມ ແລະ ຈໍາກັດ ມີບາງຂໍ້ໄດ້ລະບຸໄວ້ວ່າ: ຂໍ້ *1.3* ສືບຕໍ່ປິດການຮຽນ-ການສອນທຸກຊັ້ນຮຽນທາງພາກລັດ ແລະ ເອກະຊົນຢູ່ພາຍໃນແຂວງຊຽງຂວາງນັບແຕ່ວັນທີ 1-15 ຕຸລາ *2021,* ຂໍ້1.4 ຫ້າມຈັດກອງປະຊຸມ, ເຝິກອົບຮົມ, ໂຮມຊຸມນຸມ ແລະ ຈັດກິດຈະກໍາຕ່າງໆຢູ່ພາຍໃນແຂວງນັບແຕ່ວັນທີ *1-15* ຕຸລາ *2021* ແລະ ຂໍ້ *1.7* ປິດສູນຫຼິ້ນກິລາໃນຮົ່ມທຸກປະເພດ ແລະ ກິລາກາງແຈ້ງເຊັ່ນ ບານເຕະ, ບານສົ່ງ, ເປຕັ່ງ ແລະ ອື່ນໆລວມທັງການຈັດການແຂ່ງຂັນກິລາທີ່ມີຄົນເຂົ້າຮ່ວມເປັນຈໍານວນຫຼາຍ.

ສ່ວນດ້ານ "ສະພາບແວດລ້ອມ"ເປັນຄໍາສະເໜີໜ້ອຍກວ່າໝູ່ ເຊັ່ນວ່າ ຫ້ອງນໍ້າມີໜ້ອຍຫ້ອງ ແລະ ຄວນມີວິທີຮັກສາຄວາມສະອາດກວ່ານີ້ຕື່ມ ແລະ ຄວນປັບປຸງສະພາບແວດລ້ອມໂຮງຮຽນໃຫ້ສະອາດກວ່ານີ້ຕື່ມ ບັນຫານີ້ກໍ່ອາດເປັນເພາະວ່າການຂະຫຍາຍຕົວຂອງນັກຮຽນເພີ່ມຂຶ້ນສະພາບຫ້ອງນໍ້າຂອງໂຮງຮຽນແຕ່ລະບ່ອນຍັງມີຢູ່ຄືເດີມເຮັດໃຫ້ບໍ່ພຽງພໍກັບຄວາມຕ້ອງການຂອງນັກຮຽນ, ລະບົບນໍ້າຕ່າງໆຂອງບາງໂຮງຮຽນແມ່ນຍັງມີບໍ່ທັນພຽງພໍ ແລະ ລະບົບການຮັກສາອະນາໄມສະຖານທີ່ໂຮງຮຽນຍັງມີຄວາມບໍ່ເປັນລະບຽບຮຽບຮ້ອຍເທົ່າທີ່ຄວນຢູ່ໃນບາງໂຮງຮຽນ.

## 6. ສະຫຼຸບຜົນ

ການຄົ້ນຄວ້າໃນຄັ້ງນີ້ ເປັນການສຶກສາຄົ້ນຄວ້າກ່ຽວກັບສະພາບການຮຽນ-ການສອນຂອງໂຮງຮຽນມັດທະຍົມຕອນຕົ້ນເມືອງແປກ ແຂວງຊຽງຂວາງໂດຍມີກຸ່ມຕົວຢ່າງໂຮງຮຽນມັດທະຍົມຕອນຕົ້ນທັງໝົດ 5 ແຫ່ງ ຈາກທັງໝົດ 10 ແຫ່ງເຊິ່ງມີຈຸດປະສົງແມ່ນ ເພື່ອສຶກສາສະພາບການຮຽນ-ການສອນວິຊາຄະນິດສາດ ແລະ ເພື່ອສຶກສາຂໍ້ສະເໜີກ່ຽວກັບສະພາບການຮຽນ-ການສອນວິຊາຄະນິດສາດຂອງໂຮງຮຽນມັດທະຍົມສຶກສາຕອນຕົ້ນເມືອງແປກ ແຂວງຊຽງຂວາງ ສົກຮຽນ 2020-2021ໃນການຄົ້ນຄວ້າຄັ້ງນີ້ສະຫຼູບໄດ້ວ່າ ຄວາມຄິດເຫັນທີຫຼາຍ ແລະ ມີຜົນຕໍ່ການພັດທະນາການຈັດການຮຽນ-ການສອນເຊັ່ນວ່າ ດ້ານ ການບໍລິຫານບຸກຄະລາກອນ, ດ້ານຮູບແບບການຈັດການຮຽນ-ການສອນຄະນິດສາດ ແລະ ດ້ານທັດສະນະຄະຕິຂອງນັກຮຽນຕໍ່ກັບວິຊາຄະນິດສາດເຊິ່ງຄວາມຄິດເຫັນດັ່ງກ່າວເຫັນວ່າແຕ່ລະໂຮງຮຽນສາມາດປະຕິບັດໄດ້ຢ່າງພົ້ນເດັ່ນ. ສ່ວນຄວາມຄິດເຫັນທີ່ຕ້ອງໄດ້ເອົາໃຈໃສ່ແມ່ນດ້ານການບໍລິຫານວິຊາການ, ດ້ານການຈັດການຮຽນ-ການສອນພິເສດໃຫ້ນັກຮຽນທີ່ມັກຮຽນຄະນິດສາດ ແລະ ດ້ານການຄົ້ນຄວ້າຮໍ່າຮຽນເພີ່ມເຕີມຂອງນັກຮຽນ. ສໍາລັບການຄົ້ນຄວ້າຄັ້ງນີ້ມີຄໍາສະເໜີຫຼາຍຢ່າງທີ່ມີຄວາມສໍາຄັນໃນການພັດທະນາການຮຽນ-ການສອນທີ່ຈະຕ້ອງໄດ້ສືບທົບກັບຫຼາຍພາກສ່ວນນັບແຕ່ຂັ້ນເທິງຈົນມາຮອດຂັ້ນທ້ອງຖິ່ນເພື່ອພ້ອມກັນແກ້ໄຂເຊັ່ນວ່າ: ການຈັດສັນຄູສອນໃນບາງວິຊາທີຍັງບໍ່ພຽງພໍໃຫ້ແກ່ໂຮງຮຽນ, ການສະໜອງອຸປະກອນການຮຽນ-ການສອນ ແລະ ການຈັດກິດຈໍາກໍາເຄື່ອນໄຫວວຽກງານນອກຫຼັກສູດໂດຍສະເພາະແມ່ນກິລາ, ສິລະປະວັນນະຄະດີ ຢູ່ໃນໂຮງຮຽນ ສໍາລັບຄໍາສະເໜີດັ່ງກ່າວເຫັນວ່າແຕ່ລະໂຮງຮຽນແມ່ນມີຄວາມຈໍາເປັນຫຼາຍທີ່ຈະຕ້ອງໄດ້ພ້ອມກັນແກ້ໄຂ.

## 7. ຂໍ້ຈຳກັດຂອງການຄົ້ນຄ້ວາ

ໃນການສຶກສາຄົ້ນຄວ້າຄັ້ງນີ້ມີຂໍ້ຈຳກັດຫຼາຍຢ່າງທີ່ເຮັດໃຫ້ການຄົ້ນຄວ້າມີອັນຂາດຕົກບົກຜ່ອງເຊັ່ນ: ເປັນໄລຍະທີ່ພະຍາດ covid-19 ລະບາດ, ນັກຮຽນມັດທະຍົມຕົ້ນຈຳນວນໜຶ່ງຍັງບໍ່ສາມາດອ່ານໜັງສືໄດ້ດີເທົ່າທີ່ຄວນ, ງົບປະມານໃນການລົງເກັບກຳຂໍ້ມູນຈຳກັດ, ເອກະສານທີ່ກ່ຽວຂ້ອງເພື່ອເປັນບ່ອນອີງມີໜ້ອຍ.

## 8. ຂໍ້ສະເໜີແນະ

### *8.1 ຂໍ້ສະເໜີແນະທົ່ວໄປ*

1) ສະເໜີໃຫ້ຜູ້ບໍລິຫານໂຮງຮຽນປັບປຸງອາຄານສະຖານທີ່ໃຫ້ເໝາະສົມກັບການຈັດການຮຽນ-ການສອນ ແລະ ໃຫ້ພຽງພໍ, ຄວນສະໜອງປຶ້ມແບບຮຽນ, ປຶ້ມຄູ່ມືຄູ ແລະ ອຸປະກອນການຮຽນ-ການສອນຄະນິດສາດໃຫ້ພຽງພໍ, ສະພາບແວດລ້ອມນອກຫ້ອງຮຽນຄວນປູກຕົ້ນໄມ້ໃຫ້ຮົ່ມເຢັນ.

2) ຄູສອນຄະນິດສາດຄວນຜະລິດ ແລະ ນຳໃຊ້ສື່-ອຸປະກອນການສອນຕ່າງໆເຂົ້າໃນການສິດສອນໃຫ້ຫຼາຍ ແລະ ເໝາະສົມ, ຢູ່ຫ້ອງສະໝຸດຄວນຊອກປຶ້ມຮຽນເພີ່ມວິຊາຄະນິດສາດເຂົ້າໃຫ້ຫຼາຍຕື່ມອີກ, ຄວນແນະນຳແຫຼ່ງຂໍ້ມູນຕ່າງໆໃຫ້ນັກຮຽນໄດ້ຄົ້ນຄວ້າດ້ວຍຕົນເອງຕື່ມອີກ.

3) ນັກຮຽນຄວນເອົາໃຈໃສ່ການຮຽນຮູ້ວິຊາຄະນິດສາດໃຫ້ຫຼາຍກວ່າເກົ່າໂດຍສະເພາະແມ່ນການແກ້ບົດເຝິກຫັດທີ່ມີຢູ່ຕາມປຶ້ມແບບຮຽນ ແລະ ຊອກຮູ້ຈາກປຶ້ມຄະນິດສາດອື່ນອີກໆ.

### *8.2 ຂໍ້ສະເໜີແນະໃນການຄົ້ນຄວ້າຄັ້ງຕໍ່ໄປ*

1) ຄວນມີການສຶກສາຜົນສຳເລັດທາງການຮຽນ-ການສອນຄະນິດສາດຢູ່ໃນໂຮງຮຽນມັດທະຍົມຊັ້ນຕ່າງໆຢູ່ໃນແຕ່ລະເມືອງທົ່ວແຂວງຊຽງຂວາງ.

2) ຄວນມີການສຶກສາເປັນໝູ່ຄະນະ ແລະ ຂຶ້ນແຜນງົບປະມານຕ່າງໆເພື່ອນຳໃຊ້ເຂົ້າໃນການເກັບກຳຂໍ້ມູນເພື່ອໃຫ້ມີຄວາມສະດວກ ແລະ ມີປະສິດທິພາບ.

## 9. ເອກະສານອ້າງອີງ


ກະຊວງສຶກສາ ແລະ ກິລາ. (2008). *ແຜນຍຸດທະສາດການສຶກສາ.* ນະຄອນຫຼວງວຽງຈັນ:ກະຊວງສຶກສາທິການ ແລະ ກິລາ.

ກະຊວງສຶກສາທິການ ແລະ ກິລາ. (2010). *ໂຄງສ້າງຫຼັກສູດຊັ້ນມັດທະຍົມຕອນຕົ້ນ.* ນະຄອນຫຼວງວຽງຈັນ:ໂຮງພິມກະຊວງສຶກສາ.

ກະຊວງສຶກສາທິການ ແລະ ກິລາ. (2015). *ກົດໝາຍ ວ່າດ້ວຍການສຶກສາ ສະບັບປັບປຸງ.*ນະຄອນຫຼວງວຽງຈັນ:ໂຮງພິມກະຊວງສຶກສາ.

ສູນພັດທະນາຄູ ແລະ ຜູ້ບໍລິຫານການສຶກສາ. (2006). *ການວິໄຈດ້ານການປະຕິບັດງານ ຫົວຂໍ້ທີ່ 5 ສຶກສາການສອນຄະນິດສາດ, ພາສາລາວໃນຊັ້ນຮຽນປະຖົມປີທີ 5.* ມະຫາວິທະຍາໄລແຫ່ງ ຊາດ: ຄະນະສຶກສາສາດ.

ຫ້ອງການສຶກສາທິການ ແລະ ກິລາເມືອງແປກ. (2020). *ບົດສະຫຼຸບການຈັດຕັ້ງປະຕິບັດພັດທະນາການສຶກສາ ແລະ ກິລາສົກຮຽນ 2019-2020 ແລະ ແຜນພັດທະນາການສຶກສາ ແລະ ກິລາສົກຮຽນ 2020-2021.* ເມືອງແປກ: ບໍ່ລະບຸສະຖານທີພິມ

ສົມລວຍ ສຸຕິຍະໄທ. (1998). *ຮູບແບບຂອງຜົນການຮຽນວິຊາຄະນິດສາດ ຊັ້ນມັດທະຍົມປີທີ່3 ຂອງ ປະເທດລາວ.* ມະຫາສາລະຄາມ: ມະຫາວິທະຍາໄລສາລະຄາມ.

ນິງລັກສອນ ເຮືອນທອງ. (2007).*ການບໍລິຫານໂຮງຮຽນທີ່ມີປະສິດທິຜົນ.*ກຸງເທບ: ມະຫາວິທະຍາໄລສິລະປະກອນ.

ນ້ຳເພັດ ສິນທອງ. (1998). *ການສຶກສາປຽບທຽບຜົນສຳເລັດທາງການຮຽນ ແລະ ຄວາມວິຕົກກັງວົນ ລະຫວ່າງການອົບຮົມລ້ຽງດູແບບເຂັ້ມງວດກວດຂັນ ແບບມີເຫດຜົນ ແລະ ແບບປ່ອຍປະ ລະເລີຍຂອງນັກຮຽນຊັ້ນມັດຍົມສຶກສາປີທີ 5 ໂຮງຮຽນສອນກຸຫຼາບວິທະຍາໄລນົນທບຸຣີ.*

ວິມົນວັນ ມີບຸນ. (2014). *ພຶດຕິກຳການສອນຄະນິດສາດຂອງຄູທີ່ໄດ້ຮັບຖານະທາງດ້ານວິຊາການລະດັບມັດທະຍົມສຶກສາ.* ຈັງວັດສົງຂາ:ມະຫາວິທະຍາໄລລາດສະພັດສົງຂາ